ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຊຽງຂວາງ

ເລກທີ..09../ຈຂ.ຊຂ.

ວັນທີ..03...ພຶດສະພາ 2017.

# ຄໍາສັ່ງ
# ວ່າດ້ວຍການເພີ່ມທະວີຄວາມເອົາໃຈໃສ່ຕໍ່ວຽກງານທະບຽນສານ

**ເຖິງ**: ບັນດາທ່ານເຈົ້າເມືອງ 07 ເມືອງ, ຫົວໜ້າພະແນກການ, ກອງບັນຊາການ ປກຊ - ປກສ, ອົງການຈັດຕັ້ງອ້ອມຂ້າງແຂວງ, ທະນາຄານ, ລັດວິສາຫະກິດ, ບໍລິສັດ ແລະ ປະຊາຊົນທົ່ວແຂວງຊຽງຂວາງ.

- **ອີງຕາມ** : ກົດໝາຍວ່າດ້ວຍທະບຽນສານ ສະບັບເລກທີ 11/ສພຊ, ລົງວັນທີ 26 ພະຈິກ 2009.
- **ອີງຕາມ** : ຄໍາສັ່ງຂອງນາຍົກລັດຖະມົນຕີແຫ່ງ ສປປ ລາວ ສະບັບເລກທີ 10/ນຍ, ລົງວັນທີ 01 ເມສາ 2016 ວ່າດ້ວຍການເພີ່ມທະວີຄວາມເອົາໃຈໃສ່ຕໍ່ວຽກງານທະບຽນສານ;
- **ອີງຕາມ:** ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ(ສະບັບປັບປຸງ), ສະບັບເລກທີ68/ສພຊ, ລົງວັນທີ 14 ທັນວາ 2015.

ວຽກງານທະບຽນສານເປັນວຽກງານໜຶ່ງທີ່ມີພາລະບົດບາດສໍາຄັນຂອງຂະແໜງຍຸຕິທໍາໃນການຢັ້ງຢືນຄວາມຖືກຕ້ອງຕາມຄວາມເປັນຈິງ ແລະ ຕາມກົດໝາຍຂອງສັນຍາ ແລະ ເອກະສານອື່ນໆ, ແນໃສ່ເພີ່ມທະວີນິຕິທ□າ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ, ປະກອບສ່ວນໃນການປົກປັກຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ການພັດທະນາເສດຖະກິດ-ສັງຄົມຂອງຊາດເວົ້າລວມ; ເວົ້າສະເພາະແຂວງຊຽງຂວາງ.

ຜ່ານການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍທະບຽນສານ ທີ່ໄດ້ປະກາດໃຊ້ມາເປັນເວລາຫຼາຍປີເຫັນວ່າຄວາມຮັບຮູ້ ແລະ ຄວາມເຂົ້າໃຈຂອງສັງຄົມຕໍ່ຄວາມໝາຍ, ຄວາມສໍາຄັນໃນການນໍາເອົາສັນຍາ ແລະ ເອກະສານຕ່າງໆ ໄປຢັ້ງຢືນຄວາມຖືກຕ້ອງທາງດ້ານກົດໝາຍນໍາຫ້ອງການ ແລະ ໜ່ວຍງານທະບຽນສານຍັງບໍ່ທັນເປັນຂະບວນກວ້າງຂວາງ; ເລິກເຊິ່ງ ແລະ ມີຄວາມເຂົ້າໃຈບໍ່ທັນຈະແຈ້ງກ່ຽວກັບພາລະບົດບາດ, ສິດ ແລະ ໜ້າທີ່ ຂອງອົງການທະບຽນສານ ເຊິ່ງ ສະແດງອອກໃນການຕົກລົງບັນຫາທີ່ສໍາຄັນຍັງບໍ່ທັນເຮັດເປັນລາຍລັກອັກສອນ, ການປະກອບເອກະສານຕ່າງໆ ສ່ວນຫຼາຍຍັງບໍ່ໄປຕາມຂັ້ນຕອນຍັງມີການສ່ວຍໃຊ້ຊ່ອງຫວ່າງໃນການສ້າງສັນຍາເພື່ອມີການເອົາປຽບເຊິ່ງກັນ ແລະ ກັນ, ພ້ອມນັ້ນຍັງມີຫຼາຍພາກສ່ວນຖືເບົາ ແລະ ບໍ່ນໍາເອົາສັນຍາ ແລະ ເອກະສານຕ່າງໆ ມາຢັ້ງຢືນຄວາມຖືກຕ້ອງຈາກອົງການທະບຽນສານ ເຊິ່ງ ພາໃຫ້ເກີດມີຫຼາຍສັນຍາ ຫຼື ຫຼາຍເອກະສານບໍ່ຖືກຕ້ອງ ຈຶ່ງເປັນສາເຫດພາໃຫ້ມີຂໍ້ຂັດແຍ່ງໃນເວລາຈັດຕັ້ງປະຕິບັດ ເຮັດໃຫ້ສັງຄົມບໍ່ມີຄວາມສະຫງົບ ເນື່ອງມາຈາກບັນດາສັນຍາ, ເອກະສານດັ່ງກ່າວບໍ່ຖືກຕ້ອງຕາມກົດໝາຍ ແລະ ບໍ່ຖືກຕ້ອງຕາມຄວາມເປັນຈິງເປັນຕົ້ນ: ສັນຍາ, ພິໄນກໍາ, ລາຍເຊັນ, ລາຍໂປ້ມື, ເອກະສານສໍາເນົາ ແລະ ອື່ນໆ.

ເພື່ອແກ້ໄຂບັນຫາດັ່ງກ່າວ ໃຫ້ເຂົ້າສູ່ລະບຽບກົດໝາຍ ແລະ ທັງເພີ່ມທະວີຄວາມເອົາໃຈໃສ່ເຮັດໃຫ້ ກົດໝາຍວ່າດ້ວຍທະບຽນສານ ໄດ້ຮັບການຈັດຕັ້ງປະຕິບັດເປັນເອກະພາບໃນທົ່ວແຂວງຊຽງຂວາງ ທັງເປັນການຍົກສູງຄຸນນະພາບຂອງສັນຍາ ແລະ ເອກະສານ ອື່ນໆ ໃຫ້ມີຄຸນຄ່າທາງດ້ານກົດໝາຍທັງຮັບປະກັນການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາຂອງບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ຮັບປະກັນໃຫ້ສັງຄົມມີຄວາມສະຫງົບເປັນລະບຽບຮຽບຮ້ອຍ, ມີຄວາມຍຸຕິທໍາ ແລະ ສີວິໄລ.

## ເຈົ້າແຂວງອອກຄໍາສັ່ງ:

1. ໃຫ້ບັນດາອົງການຈັດຕັ້ງຂອງລັດ, ບຸກຄົນ ແລະ ນິຕິບຸກຄົນ ພາຍໃນຂອບເຂດ ແຂວງຊຽງຂວາງຈົ່ງໄດ້ເອົາໃຈໃສ່ຢ່າງເຂັ້ມງວດໃນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍທະບຽນສານ ສະບັບເລກທີ11/ສພຊ, ລົງວັນທີ 26 ພະຈິກ 2009 ແລະ ຄໍາສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 10/ນຍ, ລົງວັນທີ 01 ເມສາ 2016 ວ່າດ້ວຍການເພີ່ມທະວີຄວາມເອົາໃຈໃສ່ຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍທະບຽນສານ, ນິຕິກໍາຕ່າງໆ ກ່ຽວກັບວຽກງານທະບຽນສານຢ່າງເຂັ້ມງວດ ໂດຍເຮັດໃຫ້ສັງຄົມ ມີຄວາມຍຸຕິທໍາ ແລະ ສີວິໄລ ຕາມແນວທາງຂອງພັກ - ລັດ ປະກອບສ່ວນສໍາຄັນເຂົ້າໃນພາລະກິດສ້າງສາ ແລະ ພັດທະນາເສດຖະກິດ - ສັງຄົມ ຂອງຊາດເວົ້າລວມ; ເວົ້າສະເພາະ ແຂວງຊຽງຂວາງ.

2. ໃຫ້ບັນດາທ່ານເຈົ້າເມືອງ, ພະແນກການ, ກອງບັນຊາການ ປກຊ - ປກສ, ອົງການຈັດຕັ້ງອ້ອມຂ້າງແຂວງ, ທະນາຄານ, ລັດວິສາຫະກິດ, ບໍລິສັດ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ທັງພາກລັດ - ເອກະຊົນ ແລະ ພົນລະເມືອງທຸກຄົນຮັບຮູ້ ແລະ ປະຕິບັດຢ່າງເປັນເອກະພາບ ທຸກສັນຍາ ແລະ ເອກະສານຕ່າງໆ ເຊັ່ນ: ສັນຍາສໍາປະທານ, ສັນຍາຮັບເໝົາກໍ່ສ້າງ, ສັນຍາຊື້ - ຂາຍ , ສັນຍາກູ້ຢືມ, ສັນຍາເຊົ່າ, ສັນຍາຂົນສົ່ງ, ສັນຍາຫຸ້ນສ່ວນ, ສັນຍາມອບຊັບ, ບັນດາກົດລະບຽບຂອງບໍລິສັດຕ່າງໆ, ການຢັ້ງຢືນການແປພາສາ, ການສໍາເນົາເອກະສານ, ລາຍໂປ້ມື, ການສົມທຽບຕົວບຸກຄົນກັບຮູບຖ່າຍ, ການຢັ້ງຢືນຊັບເດີມ ຂອງຄູ່ຜົວ-ເມຍ ຫຼື ສິນສົມສ້າງຂອງຄູ່ຜົວ - ເມຍ ແລະ ເອກະສານຕ່າງໆ ຈະຖືວ່າເປັນສັນຍາ ຫຼື ເອກະສານທີ່ຖືກຕ້ອງ, ສອດຄ່ອງ, ມີຄຸນຄ່າ ແລະ ມີຜົນສັກສິດທາງດ້ານກົດໝາຍນັ້ນຕ້ອງໄດ້ນໍາເອົາເອກະສານທີ່ກ່າວມານັ້ນໄປຢັ້ງຢືນຄວາມຖືກຕ້ອງ ທາງດ້ານກົດໝາຍຢູ່ຫ້ອງການທະບຽນສານແຂວງຊຽງຂວາງ ຫຼື ໜ່ວຍງານທະບຽນສານເມືອງ.

3. ມອບໃຫ້ບັນດາທ່ານເຈົ້າເມືອງ, ຫົວໜ້າພະແນກການ, ກອງບັນຊາການ ປກຊ - ປກສ, ອົງການຈັດຕັ້ງອ້ອມຂ້າງແຂວງ, ທະນາຄານ, ລັດວິສາຫະກິດ, ບໍລິສັດ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ທັງພາກລັດ - ເອກະຊົນ ແລະ ພົນລະເມືອງທຸກຄົນຢູ່ພາຍໃນແຂວງຊຽງຂວາງເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຄໍາສັ່ງສະບັບນີ້ ຢ່າງເຂັ້ມງວດ ແລະ ໄດ້ຮັບຜົນດີ.

4. ມອບໃຫ້ພະແນກຍຸຕິທໍາແຂວງຊຽງຂວາງ ຕິດຕາມກວດກາການຈັດຕັ້ງປະຕິບັດຄໍາສັ່ງສະບັບນີ້ ແລະ ລາຍງານຜົນການຈັດຕັ້ງປະຕິບັດຄໍາສັ່ງສະບັບນີ້ໃຫ້ການນໍາຂອງແຂວງຊຽງຂວາງ ຢ່າງເປັນປົກກະຕິ.

5. ຄໍາສັ່ງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ເປີດທາງ ເຈົ້າແຂວງ

ຄໍາແສນ ມະນີວົງ
Khamsene MANIVONG

ບ່ອນສົ່ງ:
- ພະແນກການອ້ອມຂ້າງແຂວງ......01 ສະບັບ.
- ກອງບັນຊາການ ປກຊ - ປກສ...01 ສະບັບ.
- ເຈົ້າເມືອງ............................01 ສະບັບ.
- ທະນາຄານ, ລັດວິສາຫະກິດ.......01 ສະບັບ.
- ຫ້ອງການຍຸຕິທໍາເມືອງ.............01 ສະບັບ.
- ສໍາເນົາ..............................02 ສະບັບ.